ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 20 ຫາ 24 ມັງກອນ 2025




ພິທີ ປະກາດ ອຸທິຍານແຫ່ງຊາດເຊຊັບ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ພິທີ ປະກາດ ອຸທິຍານແຫ່ງຊາດ “ເຊຊັບ”

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ເພື່ອເຮັດໃຫ້ມີການຄຸ້ມຄອງ, ປົກປັກຮັກສາ ທີ່ເປັນລະບົບຄົບຊຸດ, ມີຄວາມເຂັ້ມແຂງທາງດ້ານ ການຈັດຕັ້ງປະຕິບັດ. ສະນັ້ນ, ໃນເຊົ້າຂອງວັນທີ 11 ມັງກອນ 2025 ທີ່ສະໂມສອນໃຫຍ່ ແຂວງ ສາລະ ວັນ ໄດ້ມີພິທີປະກາດ ອຸທິຍານແຫ່ງຊາດ ເຊຊັບ ຂຶ້ນ ໂດຍການເປັນປະທານຂອງທ່ານ ປອ. ລິນຄຳ ດວງ ສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ທ່ານ ປອ. ດາວວົງ ພອນແກ້ວ ເຈົ້າແຂວງໆສາລະ ວັນ, ທ່ານ ເຫຼັກໄຫຼ ສີວິໄລ ເຈົ້າແຂວງໆເຊກອງ. ມີ ບັນດາ ທ່ານ ຮອງເຈົ້າແຂວງ, ຮອງປະທານສະພາ ປະຊາຊົນແຂວງ, ແຂກຖືກເຊີນຂັ້ນສູນກາງ, ຂັ້ນ ແຂວງ, ເມືອງ, ນ້ອງນັກຮຽນ ພ້ອມດ້ວຍພາກສ່ວນ ທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ ທ່ານ ຮສ ປອ ທຸມທອນ ວົງວິສຸກ ຮອງ ຫົວໜ້າກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຂຶ້ນລາຍງານຫຍໍ້ ກ່ຽວກັບສະພາບລວມຂອງ ອຸທິຍານແຫ່ງຊາດ ເຊຊັບ ໃຫ້ຮູ້ວ່າ: ປ່າສະຫງວນ ແຫ່ງຊາດ ເຊຊັບ ໄດ້ຮັບການສ້າງຕັ້ງ ເປັນປ່າ ສະຫງວນແຫ່ງຊາດ ຕາມດຳລັດ ສະບັບເລກທີ 210/ ນຍ, ສະບັບ ລົງວັນທີ 9 ກຸມພາ 1996, ຊຶ່ງເປັນ 1 ໃນ 18 ແຫ່ງ ປ່າສະຫງວນ ແຫ່ງຊາດ ໃນ ສປປ ລາວ ແລະ ພາຍໃຕ້ ດຳລັດດັ່ງກ່າວ ໄດ້ໃສ່ ຊື່ປ່າສະຫງວນ ແຫ່ງຊາດ ວ່າ “ເຂດອະນຸລັກຊີວະພາບແຫ່ງຊາດ (NBCA)”, ສະເພາະປ່າສະຫງວນແຫ່ງຊາດເຊຊັບ ມີເນື້ອທີ່ 133,500 ເຮັກຕາ, ກວມເອົາເນື້ອທີ່ 2 ແຂວງ 3 ເມືອງ ຄື: ແຂວງສາລະວັນ (ເມືອງ ຕະໂອ້ຍ ແລະ ເມືອງສະໝ້ອຍ) ແລະ ແຂວງ ເຊກອງ (ເມືອງ ກະລຶມ). ຊຶ່ງອີງຕາມການເກັບກຳຂໍ້ມູນໄລຍະຜ່ານ



ມາ ຮອດປະຈຸບັນ ພື້ນທີ່ປ່າ ສະຫງວນແຫ່ງຊາດ ເຊຊັບ ມີຊະນິດພັນ ສັດ ແລະ ພືດ ປ່າ ທັງໝົດ: 874 ຊະນິດ,ໃນນັ້ນ: ປະເພດ ປາ 32 ຊະນິດ, ພັນພືດ 558 ຊະນິດ, ປະເພດນົກ 190 ຊະນິດ, ສັດເຄິ່ງບົກເຄິ່ງນ້ຳ 28 ຊະນິດ, ສັດເລືອຄານ 36 ຊະນິດ ແລະ ສັດລ້ຽງລູກດ້ວຍນົມ 30 ຊະນິດ. ພ້ອມນີ້ ຍັງໄດ້ຜ່ານເນື້ອໃນ ຂອງດຳລັດ ວ່າດ້ວຍ ການສ້າງຕັ້ງອຸທິຍານແຫ່ງຊາດ ເຊຊັບ ສະບັບເລກທີ 303/ນຍ, ລົງວັນທີ 25 ມິຖຸນາ 2024 ຢ່າງເປັນທາງການຕື່ມອີກ. ເພື່ອເຮັດໃຫ້ພິທີດັ່ງກ່າວ ມີຄວາມໝາຍຄວາມສຳຄັນ ຄະນະປະທານ ໄດ້ໃຫ້ກຽດຕັດແຖບຜ້າ ແລະ ເປີດປ້າຍ ພ້ອມທັງ ລັ່ນຄ້ອງ 9 ບາດ ເພື່ອປະກາດອຸທິຍານແຫ່ງຊາດ ເຊຊັບ ຢ່າງເປັນທາງການ. ເນື່ອງໃນໂອກາດ ການເຂົ້າຮ່ວມພິທີໃນຄັ້ງນີ້ ທ່ານ ຮສ ປອ. ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ໃຫ້ກຽດມອບ ແຜນທີ່ກຳນົດທີ່ຕັ້ງ 3 ປະເພດປ່າ ຂອງ ສປປ ລາວ ຢູ່ພາຍໃນແຂວງ ສາລະວັນ ແລະ ແຂວງ ເຊກອງ ໃຫ້ກັບ ທ່ານ ເຈົ້າແຂວງໆ ສາລະວັນ ແລະ ແຂວງ ເຊກອງຕື່ມອີກ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສິມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;